# ແຜນການສອນ ເພດສຶກສາ

## ສຳລັບອາຊີຕາເວັນອອກສຽງໃຕ້ ຂອງ amaze

ທັດສະນະ
ແບບເໝົາລວມຕໍ່
ບົດບາດທາງເພດ



amaze

Advocates for Youth
Rights. Respect. Responsibility.

UNESCO
unesco

UNFPA

# ກ່ຽວກັບບົດຮຽນບົດນີ້...

ແຜນການສອນນີ້ ແມ່ນຫນຶ່ງໃນຊຸດແຜນການສອນທີ່ມີ 9 ບົດແຍກ ທີ່ເປັນຕົ້ນສະບັບ ເພື່ອສະໜັບສະໜູນການສອນວິຊາເພດສຶກສາ ໃນໂຮງຮຽນ ຫຼື ນອກໂຮງຮຽນ ໃນອາຊີຕາເວັນອອກສຽງໃຕ້. ແຜນການສອນຕົ້ນສະບັບນີ້ ຖືກອອກແບບມາເພື່ອລວມເຂົ້າໃຊ້ໃນຊຸດວິດີໂອເພື່ອການສຶກສາຂອງ AMAZE ທີ່ກ່ຽວຂ້ອງກັບຫົວຂໍ້ແຜນການສອນ ແລະ ສາມາດນຳໃຊ້ເພື່ອເສີມກັບແຜນການສອນ ຫຼື ແຫຼ່ງຂໍ້ມູນ ທີ່ມີຢູ່ແລ້ວ ທີ່ທ່ານອາດໃຊ້ໃນການນຳສະເໜີວິຊາເພດສຶກສາ.

ຕາມຫຼັກການແລ້ວ, ການຮຽນຮູ້ກ່ຽວກັບຫົວຂໍ້ເພດສຶກສາສະເພາະໃດໜຶ່ງ ຄວນໃຫ້ຜູ້ຮຽນມີໂອກາດໄດ້ພັດທະນາ, ນຳໃຊ້ ແລະ ຝຶກຝົນການຮຽນຮູ້ ໃນແງ່ຂອງຄວາມຮູ້, ທັກສະ ແລະ ທັດສະນະຄະຕິ. ໃນແຜນການສອນເຫຼົ່ານີ້ ພວກເຮົາໄດ້ຍົກຕົວຢ່າງຜົນການຮຽນຮູ້ເບື້ອງຕົ້ນພຽງຈຳນວນໜຶ່ງທີ່ສາມາດກຳນົດເປົ້າຫມາຍໄດ້ ໂດຍຄຳນຶງວ່າບົດຮຽນພຽງບົດດຽວ ມັກຈະບໍ່ພຽງພໍທີ່ຈະບັນລຸ ຜົນການຮຽນໃດໜຶ່ງໄດ້ຢ່າງເລິກເຊິ່ງ ຫຼື ກວມເອົາຫຼາຍກວ່າຫນຶ່ງຂົງເຂດການຮຽນຮູ້ໄດ້. ເຮົາຊຸກຍູ້ໃຫ້ຄູຈັດຕາຕະລາງເວລາ ໃຫ້ມີການສອນບົດຮຽນຕິດຕາມເພີ່ມເຕີມ ເພື່ອສົ່ງເສີມຜົນການຮຽນຮູ້ທີ່ເປັນຈຸດປະສົງຂອງບົດຮຽນເພດສຶກສາເຫຼົ່ານີ້, ແລະ ໃຊ້ປະໂຫຍດຈາກໂອກາດອື່ນໆ ທັງຢູ່ໃນ ແລະ ນອກຫ້ອງຮຽນ ທີ່ຊ່ວຍໃຫ້ຜູ້ຮຽນສາມາດສະທ້ອນທັດສະນະຄະຕິ ແລະ ຝຶກຝົນ ແລະ ເສີມສ້າງທັກສະ.

TH/DOC/HWT-IQE/23/002-LA-3

amaze

# ທັດສະນະແບບເໝົາລວມ ຕໍ່ບົດບາດທາງເພດ

*ແຜນການສອນ ເພດສຶກສາ ຂອງ* **amaze**

## ຄວາມສອດຄ່ອງກັບ ຄຳແນະນຳສາກົນ ດ້ານວິຊາການກ່ຽວກັບເພດສຶກສາ

**ແນວຄວາມຄິດຫຼັກທີ 3:** ຄວາມເຂົ້າໃຈບົດບາດທາງເພດ

- **ຫົວຂໍ້ທີ 3.1:** ໂຄງສ້າງທາງສັງຄົມຂອງບົດບາດທາງເພດ ແລະ ບັນທັດຖານບົດບາດທາງເພດ, ອາຍຸ 9-12 ປີ

## ຄວາມຮູ້ພື້ນຖານຂອງນັກຮຽນ

ນັກຮຽນໄດ້ຮຽນຮູ້ກ່ຽວກັບ ລະບົບສືບພັນ ແລະ ຄວາມແຕກຕ່າງລະຫວ່າງບົດບາດທາງເພດ ແລະ ເພດ ແລະ ສິ່ງເຫຼົ່ານີ້ໄດ້ຮັບອິດທິພົນຈາກຄວາມແຕກຕ່າງກັນຫຼາຍແຫຼ່ງ.

## ກຸ່ມອາຍຸເປົ້າໝາຍ

ຊັ້ນມັດທະຍົມສຶກສາປີທີ 2-3 (ອາຍຸປະມານ 10-14 ປີ)

## ເວລາ

45 ນາທີ

## ການກະກຽມຂອງຄູ

- ພິມເຈ້ຍຝຶກຫັດ: ສົນທະນາກ່ຽວກັບທັດສະນະແບບເໝົາລວມຕໍ່ບົດບາດທາງເພດ - ໜຶ່ງຊຸດຕໍ່ນັກຮຽນໜຶ່ງຄົນ.
- ເຂົ້າເຖິງ ແລະ ເບິ່ງຕົວຢ່າງ ວິດີໂອຂອງ AMAZE ກ່ຽວກັບ ບົດບາດທາງເພດ ແລະທັດສະນະແບບເໝົາລວມຕໍ່ບົດບາດທາງເພດເພື່ອໃຫ້ລຶ້ງເຄີຍກັບເນື້ອໃນຂອງວິດີໂອ ແລະ ໃຫ້ແນ່ໃຈວ່າທ່ານຮູ້ສຶກສະບາຍໃຈທີ່ຈະເປີດມັນຢູ່ໃນຫ້ອງຮຽນ.
- ທົດສອບເປີດວິດີໂອເພື່ອໃຫ້ກຽມພ້ອມເບິ່ງໃນລະຫວ່າງການຂຶ້ນສອນ, ບໍ່ວ່າຈະເປັນການວາງລຳດັບການເປີດຈົນຮອດຕອນເລີ່ມຕົ້ນ (ເພື່ອຫຼີກລ່ຽງໂຄສະນາ) ໃນ YouTube, ອອກຈາກ **ລາຍການຫຼິ້ນຂອງ AMAZE,** ຫຼື ສະບັບທີ່ໄດ້ດາວໂຫຼດມາ. ພິຈາລະນາເລືອກໃຊ້ **ລູກຫຼິ້ນຄວາມໄວຂອງ YouTube** ເພື່ອປັບຄວາມໄວຂອງວິດີໂອເພື່ອໃຫ້ແທດເໝາະທີ່ສຸດສຳລັບນັກຮຽນ.

## ອຸປະກອນ/ເອກະສານທີ່ຕ້ອງການ

- ຄອມພິວເຕີ ທີ່ສາມາດເຂົ້າເຖິງອິນເຕີເນັດ ແລະ ລຳໂພງ
- ເຄື່ອງສາຍ LCD ແລະ ຈໍ
- ລິ້ງວິດີໂອ: https://youtu.be/YH0zosnx2Yc
- ສໍສີ (ສອງສີທີ່ແຕກຕ່າງກັນ) ແລະ ກະດານດຳ
- ວຽກບ້ານ: ບົດບາດທາງເພດ ແລະ ທັດສະນະແບບເໝົາລວມຕໍ່ບົດບາດທາງເພດ - ໜຶ່ງຊຸດຕໍ່ນັກຮຽນໜຶ່ງຄົນ



## ຈຸດປະສົງການຮຽນຮູ້

ໃນຕອນທ້າຍຂອງບົດຮຽນນີ້, ນັກຮຽນຈະສາມາດ:

1. ອະທິບາຍກ່ຽວກັບ ທັດສະນະແບບເໝົາລວມຕໍ່ບົດບາດທາງເພດ ໄດ້. (ຄວາມຮູ້)
2. ລະບຸ ທັດສະນະແບບເໝົາລວມຕໍ່ບົດບາດທາງເພດ ໂດຍສະເພາະທັດສະນະແບບເໝົາລວມທີ່ຕິດພັນກັບເດັກຍິງ ໄດ້ຢ່າງໜ້ອຍສອງຢ່າງ ແລະ ທັດສະນະແບບເໝົາລວມທີ່ຕິດພັນກັບເດັກຊາຍ ໄດ້ຢ່າງໜ້ອຍສອງຢ່າງ. (ຄວາມຮູ້)
3. ຈຳແນກໄດ້ວ່າ ທັດສະນະແບບເໝົາລວມຕໍ່ບົດບາດທາງເພດ ເປັນອັນຕະລາຍໄດ້ແນວໃດ. (ຄວາມຮູ້)
4. ເຂົ້າໃຈໄດ້ວ່າ ບົດບາດທາງເພດມີການປ່ຽນແປງຕາມການເວລາ. (ທັກສະ)

## ຂັ້ນຕອນ

### ຂັ້ນຕອນທີ 1

ແນະນຳບົດຮຽນໂດຍກ່າວວ່າ, **"ມື້ນີ້ພວກເຮົາຈະຮຽນຮູ້ກ່ຽວກັບ ທັດສະນະແບບເໝົາລວມ ທີ່ມັກຈະຕິດພັນກັບເດັກຊາຍ ແລະ ເດັກຍິງ (ຫຼື ເອີ້ນວ່າ ທັດສະນະແບບເໝົາລວມຕໍ່ບົດບາດທາງເພດ), ສິ່ງເຫຼົ່ານີ້ມີຜົນກະທົບຕໍ່ກັບພວກເຮົາແນວໃດ, ແລະ ຈະມີການປ່ຽນແປງແນວໃດ ເມື່ອເວລາຜ່ານໄປ. ໃຜສາມາດບອກຄູໄດ້ບໍ່ວ່າ 'ທັດສະນະແບບເໝົາລວມ' ໝາຍຄວາມວ່າແນວໃດ?"**. ຫຼັງຈາກນັກຮຽນສອງສາມຄົນແບ່ງປັນຄຳຕອບຂອງເຂົາເຈົ້າ, ໃຫ້ຂອບໃຈຕໍ່ການປະກອບສ່ວນຂອງພວກເຂົາ ແລະ ແບ່ງປັນຄຳນິຍາມຂອງຄຳນີ້ ພ້ອມກັນນັ້ນກໍ່ໃຫ້ຂຽນຄຳຕອບໃສ່ກະດານ: ທັດສະນະແບບເໝົາລວມ ແມ່ນຄວາມຄິດ ຫຼື ພາບລັກທີ່ຄົນມີກ່ຽວກັບປະເພດຂອງບຸກຄົນ ຫຼື ສິ່ງຂອງສະເພາະ. ເວົ້າຕໍ່, **"ແລະ ທັດສະນະແບບເໝົາລວມຕໍ່ບົດບາດທາງເພດ ແມ່ນຄວາມຄິດ ຫຼື ພາບລັກກ່ຽວກັບຄົນໂດຍອີງໃສ່ເພດຂອງພວກເຂົາ, ຫຼື ອີງໃສ່ວ່າພວກເຂົາແມ່ນ ເດັກຊາຍ ຫຼື ເດັກຍິງ."**

*

**ໝາຍເຫດສຳລັບຄູ:** ນັກຮຽນອາດຈະຕອບດ້ວຍຕົວຢ່າງຂອງທັດສະນະແບບເໝົາລວມ ແທນທີ່ຈະເປັນຄຳນິຍາມ. ທ່ານຄວນຮັບຮູ້ ແລະ ບອກໃຫ້ເຂົາເຈົ້າຮູ້ວ່າສິ່ງເຫຼົ່ານັ້ນເປັນຕົວຢ່າງທີ່ດີກ່ຽວກັບ ທັດສະນະແບບເໝົາລວມ ແລະ ຄົ້ນຄວ້າເພີ່ມເຕີມກ່ອນທີ່ຈະແບ່ງປັນຄຳນິຍາມ.

ຕໍ່ໄປ, ໃຫ້ຖາມນັກຮຽນວ່າ, “**ເມື່ອເດັກເກີດມາ, ຄຳຖາມທຳອິດທີ່ເຮົາມັກຖາມແມ່ນຫຍັງ?**” ພະຍາຍາມລໍຖ້າຄຳຖາມວ່າ, **"ເປັນຜູ້ຊາຍ ຫຼື ຜູ້ຍິງ?"** ເມື່ອທ່ານໄດ້ຍິນຄຳຖາມນີ້ແລ້ວ, ໃຫ້ຖາມຕໍ່ວ່າ, **"ແລະ ເພື່ອຕອບຄຳຖາມນີ້, ພວກເຮົາຄວນເບິ່ງບ່ອນໃດ - ດັງຂອງເດັກນ້ອຍແມ່ນບໍ່?"**. ຖ້າຫາກນັກຮຽນບໍ່ສະບາຍໃຈທີ່ຈະຕອບ (ເຂົາເຈົ້າອາດຫົວກິກໆກັກໆ ເພາະເຂົາເຈົ້າຮູ້ຄຳຕອບ ແຕ່ອາດຮູ້ສຶກວ່າເຂົາເຈົ້າບໍ່ສາມາດເວົ້າໄດ້), ທ່ານສາມາດເວົ້າວ່າ, “**ພວກເຮົາເບິ່ງສ່ວນສະເພາະໃດໜຶ່ງຂອງຮ່າງກາຍ. ຈື່ໄດ້ບໍ່ເວລາທີ່ພວກເຮົາຮຽນຮູ້ກ່ຽວກັບການແຕກບ່າວ ແລະ ແຕກສາວ ແລະ ຄວາມແຕກຕ່າງ ແລະ ຄວາມຄ້າຍຄືກັນລະຫວ່າງຮ່າງກາຍຂອງເດັກຊາຍ ແລະ ເດັກຍິງ? ຖ້າເຮົາເຫັນອະໄວຍະວະເພດຊາຍ ຄົນກໍຈະເວົ້າວ່າ ‘ເປັນເດັກຊາຍ!’ ແລະ ຖ້າເຮົາເຫັນອະໄວຍະວະເພດຍິງ ຄົນກໍຈະເວົ້າວ່າ ‘ເປັນເດັກຍິງ!’** ”.

(6 ນາທີ)

### ຂັ້ນຕອນທີ 2

ເວົ້າກັບນັກຮຽນໃນຫ້ອງຮຽນວ່າ,“**ລອງຄິດພາບເບິ່ງວ່າມີມະນຸດຕ່າງດາວກຸ່ມໜຶ່ງທີ່ຢູ່ນອກອາວະກາດໄດ້ລົງມາໂລກ ເຊິ່ງໄດ້ເຮັດການຄົ້ນຄວ້າວິໄຈກ່ຽວກັບມະນຸດຢູ່ເທິງໂລກຂອງພວກເຮົາ. ເຂົາເຈົ້າສົນໃຈໃນການຮຽນຮູ້ກ່ຽວກັບເດັກຊາຍ (ຂຽນຄຳວ່າ “ເດັກຊາຍ” ຢູ່ເທິງກະດານດຳ ແລະ ແຕ້ມຮູບກ່ອງຂ້າງລຸ່ມ). ພວກເຮົາຈະພັນລະນາລັກສະນະຂອງເດັກຊາຍແນວໃດໃຫ້ກັບມະນຸດຕ່າງດາວທີ່ມາໂລກ ແລະ ພວກເຂົາບໍ່ເຄີຍເຫັນເດັກຊາຍມາກ່ອນ?**”.

ຂໍໃຫ້ນັກຮຽນໃນຫ້ອງຮຽນຕອບຄໍາຖາມຂອງທ່ານດັ່ງໆວ່າ, "**ເດັກຊາຍແມ່ນ...,**" ໂດຍບອກເຂົາເຈົ້າວ່າ ບໍ່ຈໍາເປັນຕ້ອງກັງວົນວ່າເຂົາເຈົ້າຈະຕອບແນວໃດ. ຂຽນຄໍາຕອບທັງໝົດໃສ່ເທິງກະດານດໍາພາຍໃນກ່ອງ. ໃນຂະນະທີ່ທ່ານກໍາລັງຂຽນ, ໃຫ້ເວົ້າຄືນປະໂຫຍກທີ່ວ່າ, "**ເດັກຊາຍແມ່ນ...**" ເພື່ອສືບຕໍ່ກະຕຸ້ນນັກຮຽນ. ສືບຕໍ່ຂຽນຈົນກວ່າຈະໄດ້ຄໍາຕອບຂອງນັກຮຽນໃສ່ເຕັມກ່ອງ.

ຂອບໃຈນັກຮຽນທີ່ໄດ້ສ້າງລາຍການ. ຫຼັງຈາກນັ້ນເວົ້າວ່າ, "**ມະນຸດຕ່າງດາວຮູ້ສຶກຂອບໃຈສໍາລັບຂໍ້ມູນທັງໝົດທີ່ເຈົ້າໄດ້ສະໜອງໃຫ້. ກ່ອນພວກເຂົາຈະກັບບ້ານ, ເຂົາເຈົ້າຕ້ອງການຂໍ້ມູນເພີ່ມເຕີມອີກໜ້ອຍໜຶ່ງ. ເຂົາເຈົ້າກໍຍັງຕ້ອງການທີ່ຈະສາມາດພັນລະນາໄດ້ວ່າເດັກຍິງເປັນແນວໃດ (ຂຽນຄໍາວ່າ "ເດັກຍິງ" ເທິງກະດານດໍາ ແລະ ແຕ້ມຮູບກ່ອງຂ້າງລຸ່ມ). ພວກເຮົາຈະພັນລະນາລັກສະນະຂອງເດັກຍິງແນວໃດໃຫ້ກັບມະນຸດຕ່າງດາວທີ່ມາໂລກ ແລະ ພວກເຂົາບໍ່ເຄີຍເຫັນເດັກຍິງມາກ່ອນ?**". ຄືກັບຂ້າງເທິງ, ຂໍໃຫ້ນັກຮຽນໃນຫ້ອງຮຽນຕອບຄໍາຖາມຂອງທ່ານດັ່ງໆ ວ່າ, "**ເດັກຍິງແມ່ນ...,**" ໂດຍບອກເຂົາເຈົ້າວ່າບໍ່ຈໍາເປັນຕ້ອງກັງວົນວ່າເຂົາເຈົ້າຈະຕອບແນວໃດ. ຂຽນຄໍາຕອບທັງໝົດໃສ່ເທິງກະດານດໍາພາຍໃນກ່ອງສໍາລັບເດັກຍິງ. ໃນຂະນະທີ່ທ່ານກໍາລັງຂຽນ, ໃຫ້ເວົ້າຄືນປະໂຫຍກທີ່ວ່າ, "**ເດັກຍິງແມ່ນ...**" ເພື່ອສືບຕໍ່ກະຕຸ້ນນັກຮຽນ. ສືບຕໍ່ຂຽນຈົນກວ່າຈະໄດ້ຄໍາຕອບເຕັມກະດານ ຫຼື ຈົນກວ່າຈະໄດ້ຄໍາຕອບທີ່ມີຄວາມຍາວທີ່ໃກ້ຄຽງກັບທີ່ນັກຮຽນໄດ້ສ້າງຂຶ້ນໃຫ້ກັບລາຍການຂອງ "**ເດັກຊາຍ**".

ຂອບໃຈນັກຮຽນສໍາລັບການປະກອບສ່ວນ, ແລະ ໃຫ້ບອກເຂົາເຈົ້າວ່າມະນຸດຕ່າງດາວໄດ້ກັບໄປຢ່າງມີຄວາມສຸກກັບຂໍ້ມູນທີ່ເປັນປະໂຫຍດທັງໝົດທີ່ເຂົາເຈົ້າໄດ້ໃຫ້.

(12 ນາທີ)

## ຂັ້ນຕອນທີ 3

ຂໍໃຫ້ນັກຮຽນເບິ່ງທັງສອງລາຍການ. ຖາມວ່າ, "**ເຈົ້າສັງເກດເຫັນຫຍັງກ່ຽວກັບສອງລາຍການນີ້?**"

**ໝາຍເຫດສໍາລັບຄູ:** ເນື່ອງຈາກລາຍການເຫຼົ່ານີ້ສ້າງຂຶ້ນໂດຍນັກຮຽນ, ສິ່ງທີ່ແບ່ງປັນອາດຈະແຕກຕ່າງກັນໄປໃນແຕ່ລະຄັ້ງທີ່ທ່ານຈັດກິດຈະກໍາ. ໃນບາງກໍລະນີ, ລາຍການທີ່ສ້າງຂຶ້ນອາດຈະເປັນທາງບວກໝົດຕໍ່ກັບເພດໃດເພດໜຶ່ງ, ແລະ ເປັນທາງລົບໝົດຕໍ່ກັບອີກເພດໜຶ່ງ. ໃນກໍລະນີອື່ນໆ, ມັນອາດຈະປະສົມກັນ.

ຄໍາຕອບທີ່ເປັນໄປໄດ້ແມ່ນຂຶ້ນກັບສິ່ງທີ່ບັນທຶກໄວ້ໃນເຈ້ຍ. ຕົວຢ່າງ, "**ມີຫຼາຍຢ່າງທີ່ເປັນທາງລົບຕໍ່ກັບເດັກຍິງ ແລະ ມີຫຼາຍຢ່າງທີ່ເປັນທາງບວກຕໍ່ກັບເດັກຊາຍ,**" ຫຼື "**ເນື້ອຫາທີ່ກ່ຽວກັບເດັກຊາຍຈະເນັ້ນໃສ່_____, ໃນຂະນະທີ່ ເນື້ອຫາທີ່ກ່ຽວກັບເດັກຍິງຈະເນັ້ນໃສ່_____.**"ໃນຂະນະທີ່ນັກຮຽນລະບຸຫົວຂໍ້ທີ່ເຂົາເຈົ້າສັງເກດເຫັນ, ໃຫ້ຖາມວ່າ, "**ມີສິ່ງໃດຢູ່ໃນລາຍການນີ້ທີ່ເປັນ ທັດສະນະແບບເໝົາລວມຕໍ່ບົດບາດທາງເພດ, ນັ້ນແມ່ນ, ຄວາມຄິດທີ່ຫຼາຍຄົນມີຕໍ່ບຸກຄົນ ເພາະວ່າພວກເຂົາເປັນເດັກຊາຍ ຫຼື ເດັກຍິງ?**" ນັກຮຽນຈະຮູ້ໄດ້ວ່າ, ແມ່ນແລ້ວ, ນີ້ແມ່ນຕົວຢ່າງ.

ຖາມນັກຮຽນວ່າ, “**ທັດສະນະແບບເໝົາລວມຕໍ່ບົດບາດທາງເພດທີ່ກ່ຽວຂ້ອງກັບເດັກຊາຍ ມີຜົນຕໍ່ເດັກຊາຍແນວໃດ? ເດັກຍິງເດ?**” **"ສິ່ງຕ່າງໆທີ່ໄດ້ລະບຸໄວ້ຢູ່ໃນລາຍການຂອງເດັກຊາຍສາມາດນຳໃຊ້ກັບເດັກຍິງໄດ້ບໍ່?"**. ຕົວຢ່າງຂອງເລື່ອງນີ້ອາດຈະແມ່ນ, **"ເປັນນັກກິລາ."** ຖາມວ່າ, “**ມັນຈະເປັນຫຍັງບໍ່ ຖ້າເດັກຍິງເປັນ** [**ນັກກິລາ; ຕະຫລົກ; ເຂັ້ມແຂງ**]**?**” ນັກຮຽນໃນຫ້ອງຮຽນມີແນວໂນ້ມທີ່ຈະເວົ້າວ່າ ແມ່ນແລ້ວ. ເກີດຫຍັງຂຶ້ນກັບເດັກຊາຍຜູ້ທີ່ອາດຈະປະພຶດໂຕແຕກຕ່າງຈາກທັດສະນະແບບເໝົາລວມ? ເຂົາເຈົ້າຈະຖືກປະຕິບັດແນວໃດ?

ຖາມນັກຮຽນວ່າ, “**ທັດສະນະແບບເໝົາລວມຕໍ່ບົດບາດທາງເພດທີ່ກ່ຽວຂ້ອງກັບເດັກຍິງ ມີຜົນຕໍ່ເດັກຍິງແນວໃດ? ເດັກຊາຍເດ?**” **"ສິ່ງຕ່າງໆທີ່ໄດ້ລະບຸໄວ້ຢູ່ໃນລາຍການຂອງເດັກຍິງສາມາດນຳໃຊ້ກັບເດັກຊາຍໄດ້ບໍ່?"**. ຕົວຢ່າງຂອງເລື່ອງນີ້ອາດຈະແມ່ນ, **"ມີຄວາມອ່ອນໄຫວ."** ຖາມວ່າ, “**ມັນຈະເປັນຫຍັງບໍ່ ຖ້າເດັກຊາຍ** [**ມີຄວາມອ່ອນໄຫວ; ຫວານ; ດຣາມາ**]**?**” ຄຳຕອບຕໍ່ບັນຫານີ້ອາດຈະປະສົມກັນ; ເດັກຍິງອາດຈະມີແນວໂນ້ມທີ່ຈະເວົ້າວ່າ ບໍ່ເປັນຫຍັງຖ້າເດັກຊາຍຈະສະແດງຕົວຕົນຂອງພວກເຂົາໃນຮູບແບບທີ່ແຕກຕ່າງກັນ, ໃນຂະນະທີ່ເດັກຊາຍອາດຈະເວົ້າວ່າ ບາງສິ່ງບາງຢ່າງກະບໍ່ເໝາະສົມສຳລັບເດັກຊາຍທີ່ຈະເປັນ ຫຼື ທີ່ຈະເຮັດ.

ຖາມວ່າ, “**ແລ້ວເດັກຊາຍທີ່ອາດປະພຶດໂຕແຕກຕ່າງຈາກທັດສະນະແບບເໝົາລວມຕໍ່ບົດບາດທາງເພດ ສຳລັບເດັກຊາຍເດ…ເຂົາເຈົ້າຈະຖືກປະຕິບັດແນວໃດ? ແລ້ວເດັກຍິງທີ່ອາດປະພຶດໂຕແຕກຕ່າງຈາກທັດສະນະແບບເໝົາລວມຕໍ່ບົດບາດທາງເພດ ສຳລັບເດັກຍິງເດ…ເຂົາເຈົ້າຈະຖືກປະຕິບັດແນວໃດ? ແລ້ວກຸ່ມຍິງຮັກຍິງ, ກຸ່ມຊາຍຮັກຊາຍ, ກຸ່ມທີ່ຮັກໄດ້ທັງຍິງ ແລະ ຊາຍ, ກຸ່ມທີ່ແປງເພດ, ກຸ່ມທີ່ຮັກໂດຍບໍ່ຈຳກັດເພດ (LGBTQ) ເດ…. ພວກເຂົາຈະຖືກປະຕິບັດແນວໃດ?" "ແລ້ວມີຄົນອື່ນບໍ່ທີ່ອາດຈະຖືກປະຕິບັດແຕກຕ່າງກັນຍ້ອນວ່າພວກເຂົາບໍ່ປະພຶດຕາມພຶດຕິກຳທີ່ຄາດໄວ້ສຳລັບເດັກຍິງ ຫຼື ເດັກຊາຍ?**”

(15 ນາທີ)

**ໝາຍເຫດສຳລັບຄູ:** ຖ້າຫາກນັກຮຽນນຳໃຊ້ ພາສາ ຫຼື ອາລົມທີ່ບໍ່ເໝາະສົມ ຊຶ່ງເປັນການກະທົບຕໍ່ກັບກຸ່ມ LGBTQ, ໃຫ້ຂັດຂວາງສະຖານະການທີ່ກຳລັງເກີດຂຶ້ນ, ຂໍໃຫ້ນັກຮຽນຢຸດ, ອະທິບາຍວ່າພາສາທີ່ໃຊ້ນັ້ນໄດ້ທຳຮ້າຍຈິດໃຈ, ແລະ ໂອ້ລົມກັບນັກຮຽນເຫຼົ່ານັ້ນຫຼັງຈາກເລີກຮຽນເພື່ອແກ້ໄຂພຶດຕິກຳທີ່ບໍ່ເໝາະສົມ. ເນັ້ນຢ້ຳຕື່ມວ່າ ທັດສະນະແບບເໝົາລວມຕໍ່ບົດບາດທາງເພດ ສາມາດເປັນອັນຕະລາຍໄດ້ ແລະ ທຸກຄົນຄວນຈະສະແດງຕົວຕົນທີ່ແທ້ຈິງຂອງຕົນເອງໃນແບບຕົນເອງເປັນ ແລະ ເຂົ້າຮ່ວມກິດຈະກຳທີ່ເຂົາເຈົ້າມັກ, ບໍ່ວ່າພວກເຂົາຈະເປັນ LGBTQ ຫຼື ບໍ່.

## ຂັ້ນຕອນທີ 4

ຕໍ່ໄປ, ຂໍໃຫ້ນັກຮຽນຈັບຄູ່ ແລະ ໃຫ້ແຕ່ລະຄົນແບ່ງປັນ ທັດສະນະແບບເໝົາລວມຕໍ່ບົດບາດທາງເພດ ທີ່ເຂົາເຈົ້າຄິດວ່າມີການປ່ຽນແປງຕາມການເວລາ. ຈາກນັ້ນປະມານ 5 ນາທີ, ຂໍໃຫ້ອາສາສະໝັກຄົນໃດຄົນໜຶ່ງແບ່ງປັນກ່ຽວກັບທັດສະນະ ທີ່ເຂົາເຈົ້າໄດ້ສົນທະນາກັນ ແລະ ມັນມີການປ່ຽນແປງແນວໃດຕາມການເວລາ.

(8 ນາທີ)

## ຂັ້ນຕອນທີ 5

ສະຫຼຸບບົດຮຽນໂດຍໃຫ້ສັງເກດວ່າ ທັດສະນະແບບເໝົາລວມຕໍ່ບົດບາດທາງເພດ ແມ່ນແນວຄວາມຄິດ ຫຼື ພາບລັກກ່ຽວກັບຄົນໂດຍອີງໃສ່ເພດຂອງເຂົາເຈົ້າ, ເຊັ່ນວ່າເຂົາເຈົ້າແມ່ນເດັກຊາຍ ຫຼື ເດັກຍິງ. ບາງຄັ້ງທັດສະນະແບບເໝົາລວມເຫຼົ່ານີ້ເບິ່ງຄືວ່າມີເຫດມີຜົນ ແຕ່ບາງຄັ້ງມັນກໍ່ທຳຮ້າຍຈິດໃຈ ແລະ ຈົນເຖິງສາມາດເຮັດໃຫ້ເກີດອັນຕະລາຍ (ມັນຈະເປັນການດີທີ່ຈະອ້າງອີງໃສ່ສອງສາມຕົວຢ່າງທີ່ນັກຮຽນຍົກຂຶ້ນໃນເວລາສົນທະນາ). ເດັກຊາຍ ແລະ ເດັກຍິງທຸກຄົນຄວນສາມາດເປັນຕົວຂອງຕົວເອງໄດ້ ແລະ ບໍ່ຈຳເປັນຕ້ອງປະພຶດ ຫຼື ເຮັດສິ່ງໃດໜຶ່ງສະເພາະ ພຽງເພາະວ່າເຂົາເຈົ້າເປັນເດັກຍິງ ຫຼື ເດັກຊາຍ ແລະ ທັດສະນະແບບເໝົາລວມຕໍ່ບົດບາດທາງເພດ ມີການປ່ຽນແປງຕາມການເວລາ.

(2 ນາທີ)

**ໝາຍເຫດສຳລັບຄູ:** ຄຳຖາມທີ່ສຳຄັນທີ່ສຸດທີ່ທ່ານສາມາດຖາມໄດ້ໃນຂະນະທີ່ທ່ານສົນທະນາບັນດາລາຍການເຫຼົ່ານີ້ກັບນັກຮຽນແມ່ນ, "ເປັນຫຍັງເຈົ້າຈຶ່ງຄິດວ່າສິ່ງນີ້ແມ່ນ?" ໃນການຂໍໃຫ້ພວກເຂົາສະທ້ອນເຖິງສິ່ງທີ່ພວກເຂົາໄດ້ສ້າງຢູ່ໃນລາຍການ, ທ່ານຄວນຊ່ວຍພວກເຂົາທ້າທາຍບັນທັດຖານທາງເພດທີ່ພວກເຂົາໄດ້ຖືກສອນມາຕັ້ງແຕ່ອາຍຸຍັງນ້ອຍ. ນອກຈາກນັ້ນ, ການກຽດຊັງກຸ່ມຮັກຮ່ວມເພດ (ກະເທີຍ) ມີແນວໂນ້ມທີ່ຈະເກີດຂຶ້ນ - ໂດຍສະເພາະເດັກຊາຍຈະເວົ້າວ່າການເຮັດສິ່ງໃດສິ່ງໜຶ່ງໃນລາຍການຂອງ "ເດັກຍິງ" ໝາຍຄວາມວ່າເດັກຊາຍແມ່ນ "ກະເທີຍ." ອີກເທື່ອໜຶ່ງ, ທ້າທາຍແນວຄວາມຄິດນີ້ອີກໂດຍການຖາມວ່າ, "ເປັນຫຍັງ?" ແລະ ຊີ້ໃຫ້ເຫັນວ່າພວກເຂົາບໍ່ໄດ້ເວົ້າຄືກັນກ່ຽວກັບເດັກຍິງເຮັດສິ່ງໃດສິ່ງໜຶ່ງທີ່ຢູ່ໃນລາຍການຂອງເດັກຊາຍ.

## ຂັ້ນຕອນທີ 6

ອະທິບາຍວຽກບ້ານ: ເບິ່ງວິດີໂອກາຕູນສັ້ນ ກ່ຽວກັບບົດບາດທາງເພດ ແລະ ທັດສະນະແບບເໝົາລວມຕໍ່ບົດບາດທາງເພດ ແລະ ຕອບຄຳຖາມໃນເອກະສານວຽກບ້ານ.

(2 ນາທີ)

## ສະຫຼຸບປະເດັນທີ່ສຳຄັນ

- ທັດສະນະແບບເໝົາລວມຕໍ່ບົດບາດທາງເພດ ແມ່ນແນວຄວາມຄິດ ຫຼື ພາບລັກທີ່ຄົນມີຕໍ່ຄົນ ໂດຍອີງໃສ່ເພດຂອງເຂົາເຈົ້າ, ເຊັ່ນວ່າ ເຂົາເຈົ້າແມ່ນເດັກຍິງ ຫຼື ເດັກຊາຍ.
- ທັດສະນະແບບເໝົາລວມຕໍ່ບົດບາດທາງເພດ ອາດຈະສ້າງຄວາມເຈັບປວດ ແລະ ເປັນອັນຕະລາຍໄດ້ ແລະ ເດັກຍິງ ແລະ ເດັກຊາຍທຸກຄົນຄວນສາມາດເປັນຕົວຂອງຕົວເອງໄດ້ ແລະ ບໍ່ຈຳເປັນຕ້ອງປະພຶດ ຫຼື ເຮັດສິ່ງໃດໜຶ່ງສະເພາະ ພຽງເພາະວ່າເຂົາເຈົ້າເປັນເດັກຍິງ ຫຼື ເດັກຊາຍ.
- ທຸກຄົນສາມາດມີສ່ວນຮ່ວມໃນການປ່ຽນແປງ ທັດສະນະແບບເໝົາລວມຕໍ່ບົດບາດທາງເພດ.
- ບົດບາດທາງເພດມີວິວັດທະນາການໄປຕາມການເວລາ ແລະ ທຸກຄົນສາມາດມີສ່ວນຮ່ວມໃນການປ່ຽນແປງໄດ້ເພາະນັບມື້ຄົນຈຳນວນຫຼາຍຖືກຈຳກັດໜ້ອຍລົງໂດຍທັດສະນະແບບເໝົາລວມຕໍ່ບົດບາດທາງເພດ ແລະ ສາມາດປະພຶດຕົວຕົນໃນແບບທີ່ເຂົາເຈົ້າເປັນແທ້ໆ.

## ທາງເລືອກສຳລັບການປະເມີນຈຸດປະສົງການຮຽນຮູ້ໃນຂະນະສະຫຼຸບບົດຮຽນ

ໃນຕອນທ້າຍຂອງຊົ່ວໂມງຮຽນ, ແຈກຢາຍເອກະສານວຽກບ້ານໃຫ້ນັກຮຽນ: ທັດສະນະແບບເໝົາລວມຕໍ່ບົດບາດທາງເພດ, ແລະ ໃຫ້ນັກຮຽນຕອບຄຳຖາມ ແລະ ສົ່ງໃນຂະນະອອກຈາກຫ້ອງຮຽນ.

## ຄຳແນະນຳໃນການປັບປ່ຽນສຳລັບການຮຽນການສອນທາງໄກ

ໃນກໍລະນີທີ່ເປັນການສອນທາງໄກ, ນຳໃຊ້ລະບົບດິຈິຕອນເຊັ່ນ Google Classroom ຫຼື Zoom ແລະ ພິຈາລະນານຳໃຊ້ເຄື່ອງມື ເຊັ່ນ Jamboard ເພື່ອສ້າງລາຍການຂອງ ທັດສະນະແບບເໝົາລວມຕໍ່ບົດບາດທາງເພດ.

## ວຽກບ້ານ (ຖ້າມີ)

ໂອ້ລົມກ່ຽວກັບບົດບາດທາງເພດ ແລະ ທັດສະນະແບບເໝົາລວມຕໍ່ບົດບາດທາງເພດ, ເອກະສານວຽກບ້ານທີ່ເຂົາເຈົ້າຕ້ອງເຮັດໃຫ້ສຳເລັດຮ່ວມກັບຜູ້ໃຫຍ່ທີ່ເຊື່ອຖືໄດ້, ເຊິ່ງເຂົາເຈົ້າແບ່ງປັນປະຕິກິລິຍາຕໍ່ກັບວິດີໂອ ແລະ ຕອບຄຳຖາມກ່ຽວກັບທັດສະນະແບບເໝົາລວມຕໍ່ບົດບາດທາງເພດ.

## ໂອ້ລົມກ່ຽວກັບ ທັດສະນະແບບເໝົາລວມຕໍ່ບົດບາດທາງເພດ

ວຽກບ້ານ
ທັນສູ່ການປະຕິບັດຕົວຈິງ

ຊື່: ______________________________

ວັນທີ: ______________________________

ລາຍເຊັນ ຂອງຜູ້ໃຫຍ່ທີ່ເຊື່ອຖືໄດ້: ______________________________

ຄຳແນະນຳ: ເບິ່ງວິດີໂອສອງນາທີຈາກ Amaze ເລື່ອງ "ບົດບາດທາງເພດ ແລະ ທັດສະນະແບບເໝົາລວມຕໍ່ບົດບາດທາງເພດ" https://bit.ly/genderrolesandstereotypes. ຮ່ວມກັນກັບຜູ້ໃຫຍ່ທີ່ເຊື່ອຖືໄດ້. ສົນທະນາວິດີໂອຮ່ວມກັນໂດຍການຖາມເຊິ່ງກັນແລະກັນວ່າ:

- ເຈົ້າມັກວິດີໂອບໍ່, ຍ້ອນຫຍັງຈຶ່ງມັກ ແລະ ຍ້ອນຫຍັງຈຶ່ງບໍ່ມັກ?
- ເຈົ້າຄິດເຖິງຫຍັງໃນເວລາເບິ່ງວິດີໂອ?
- ວິດີໂອນີ້ເຮັດໃຫ້ເຈົ້າຮູ້ສຶກແນວໃດ?

ຫຼັງຈາກສົນທະນາກ່ຽວກັບວິດີໂອແລ້ວ, ຕອບຄຳຖາມຕໍ່ໄປນີ້ຮ່ວມກັນ.

**ຄຳຖາມທີ 1: ເຈົ້າມີປະຕິກິລິຍາແນວໃດຕໍ່ວິດີໂອ?**

**ນັກຮຽນ:**

______________________________
______________________________
______________________________
______________________________

**ຜູ້ໃຫຍ່:**

______________________________
______________________________
______________________________
______________________________

**ຄຳຖາມທີ 2: ສຳລັບຜູ້ໃຫຍ່, ບົດບາດທາງເພດຫຍັງທີ່ພົບເລື້ອຍໆເມື່ອເຈົ້າໃຫຍ່ຂຶ້ນ ຈາກນັ້ນກໍ່ມີການປ່ຽນແປງ/ກາຍເປັນເລື່ອງທຳມະດາໜ້ອຍລົງ?**

**ຜູ້ໃຫຍ່:**

______________________________
______________________________
______________________________
______________________________

ວຽກບ້ານ

ທັນສູ່ການປະຕິບັດຕົວຈິງ

**ຄໍາຖາມທີ 3: ຖ້າເຈົ້າສາມາດປ່ຽນບົດບາດທາງເພດທີ່ມີຢູ່ໃນປະຈຸບັນ, ມັນຈະແມ່ນຫຍັງ ແລະ ເຈົ້າສາມາດເຮັດຫຍັງໄດ້ແດ່ເພື່ອຊ່ວຍປ່ຽນສິ່ງນັ້ນ?**

**ນັກຮຽນ:**

______________________________

______________________________

______________________________

______________________________

**ຜູ້ໃຫຍ່:**

______________________________

______________________________

______________________________

______________________________

ຊື່:

ວັນທີ:

**ຄຳແນະນຳ: ຕອບຄຳຖາມລຸ່ມນີ້ ແລະ ສົ່ງວຽກບ້ານໃນຂະນະອອກຈາກຫ້ອງຮຽນ**

1. **ກວດເບິ່ງຄຳນິຍາມທີ່ຖືກຕ້ອງຂອງ ທັດສະນະແບບເໝົາລວມຕໍ່ບົດບາດທາງເພດ.**
   - ☐ ແນວຄວາມຄິດ ຫຼື ພາບລັກທີ່ຄົນມີກ່ຽວກັບປະເພດຂອງບຸກຄົນ ຫຼື ສິ່ງຂອງສະເພາະ.
   - ☐ ແນວຄວາມຄິດ ຫຼື ພາບລັກທີ່ຄົນມີກ່ຽວກັບຄົນ ໂດຍອີງໃສ່ການເປັນເດັກຊາຍ ຫຼື ເດັກຍິງ.
   - ☐ ແນວຄວາມຄິດ ຫຼື ພາບລັກກ່ຽວກັບຄົນໂດຍອີງໃສ່ອາຍຸຂອງເຂົາເຈົ້າ.
   - ☐ ແນວຄວາມຄິດ ຫຼື ພາບລັກກ່ຽວກັບຄົນໂດຍອີງໃສ່ສະຖານທີ່ທີ່ເຂົາເຈົ້າອາໄສຢູ່.

2. **ອະທິບາຍ ທັດສະນະແບບເໝົາລວມຕໍ່ບົດບາດທາງເພດ ທີ່ຕິດພັນສະເພາະກັບເດັກຍິງ ສອງ ຢ່າງ ໂດຍຕື່ມໃສ່ປະໂຫຍກລຸ່ມນີ້ໃຫ້ສຳເລັດ.**

   a. ເດັກຍິງຄວນ ______________________________

   b. ເດັກຍິງຄວນ ______________________________

3. **ລະບຸ ທັດສະນະແບບເໝົາລວມຕໍ່ບົດບາດທາງເພດ ທີ່ຕິດພັນສະເພາະກັບເດັກຊາຍ ສອງ ຢ່າງ.**

   a. ເດັກຊາຍຄວນ ______________________________

   b. ເດັກຊາຍຄວນ ______________________________

4. **ອະທິບາຍໜຶ່ງຢ່າງ ທີ່ທັດສະນະແບບເໝົາລວມຕໍ່ບົດບາດທາງເພດ ສາມາດເຮັດໃຫ້ເກີດອັນຕະລາຍໄດ້.**

5. **ຂີດອ້ອມມົນໃສ່ຂໍ້ຄວາມລຸ່ມນີ້ ວ່າ ຖືກ ຫຼື ຜິດ.**

   ທັດສະນະແບບເໝົາລວມຕໍ່ບົດບາດທາງເພດ ຍັງຄົງຄືເກົ່າ ແລະ ບໍ່ສາມາດປ່ຽນແປງໄດ້.

   ຖືກ　　　　　　ຜິດ